

## 5. ລາຍຊື່ຜູ້ໃຫ້ຂໍ້ມູນ

| ລ/ດ | ຊື່ແລະ ນາມສະກຸນ | ອາຍຸ |
|---|---|---|
| 1. | ແມ່ ລຳໄຍ | 40 |
| 2. | ແມ່ ປ້າຍ | 60 |
| 3. | ແມ່ ອຳມະລາ | 50 |
| 4. | ແມ່ ລຸນນີ | 40 |
| 5. | ແມ່ ຄູນມາ | 42 |
| 6. | ແມ່ ເຕ້ຍ | 30 |
| 7. | ແມ່ ແຊງ | 30 |
| 8. | ແມ່ ເສດ | 44 |
| 8. | ແມ່ ລາ | 44 |
| 9. | ແມ່ ເກດ | 46 |
| 10. | ແມ່ ລັກດີ | 43 |
| 11. | ພໍ່ ເຂົາ | 60 |
| 12. | ແມ່ ສຸດ | 40 |
| 13. | ແມ່ ສິດ | 44 |
| 14. | ແມ່ ທຳ | 46 |
| 15. | ແມ່ ຄຳໄຜ່ | 52 |

Mekong

# ການປູກ ຢາສູບຂອງ ຊາວບ້ານບາສັງ









## 1. ປະຫວັດຄວາມເປັນມາຂອງການປູກຢາສູບ

ການປູກຢາສູບແມ່ນພໍ່-ແມ່ນຳພາປູກມາແຕ່ດຶກດຳບັນ, ແຕ່ກ່ອນພວກເພີ່ນປູກຢາສູບພື້ນເມືອງສ່ວນຫຼາຍແມ່ນປູກຢາຊອຍໃສ່ຄອກງົວ, ຄອກຄວາຍ ຫຼື ຕາມແຄມແມ່ນ້ຳເຊ, ແຄມແມ່ນ້ຳຂອງ. ການປູກຢາຊອຍໃນເມື່ອກ່ອນແມ່ນປູກມາຮັບໃຊ້ໃນຊີວິດປະຈຳວັນ ແລະ ແບ່ງປັນພີ່ນ້ອງ ຫຼື ເວລາມີບຸນສິນກິນທານກໍ່ໃຊ້ຢາສູບກໍ່ອັນນີ້ໃຫ້ພີ່ນ້ອງສູບ. ການປູກຢາແຕ່ກ່ອນແມ່ນບໍ່ໄດ້ໃສ່ຝຸ່ນເຄມີໃສ່ແຕ່ຝຸ່ນທຳມະຊາດເຊັ່ນ: ຂີ້ງົວ, ຂີ້ຄວາຍ  ຍ້ອນວ່າດິນເຂດບ້ານນາສັງແມ່ນອຸດົມສົມບູນໄປດ້ວຍດິນຝຸ່ຍເໝາະສົມໃນການປູກພືດພັນຫຼາຍຊະນິດເພາະວ່າດິນເຂດດັ່ງກ່າວຖືກນ້ຳຖ້ວມໃນທຸກໆປີ. ມາຮອດປະຈຸບັນນີ້ການປູກຢາແມ່ນໄດ້ກາຍເປັນສິນຄ້າ, ມີການນຳໃຊ້ແນວພັນໃໝ່ທີ່ເໝາະສົມກັບພື້ນທີ່ ແລະ ໄດ້ນຳໃຊ້ເຄື່ອງຈັກທີ່ທັນສະໄໝເຂົ້າມາຊ່ວຍ ນອກນັ້ນຍັງນຳໃຊ້ຝຸ່ນເຄມີ.

## 2. ຄວາມສຳຄັນຂອງການປູກຢາສູບ

ການປູກຢາສູບແມ່ນຊ່ວຍສ້າງລາຍຮັບໃຫ້ແກ່ຄອບຄົວ, ສຳລັບຜູ້ທີ່ປູກຢາສູບໃນປີໜຶ່ງມີລາຍຮັບປະມານ 10-20 ລ້ານກີບ ຕໍ່ປີ, ເຮັດໃຫ້ປະຊາຊົນມີວຽກເຮັດງານທຳ ຫຼັງຈາກສຳເລັດການເກັບກ່ຽວເຂົ້ານາປີ, ເປັນຄວາມຮູ້ທີ່ສອນລູກສອນຫຼານໄດ້ປູກສືບທອດຕໍ່ໆກັນໄປ.

## 3. ວິທີການແນວໃດ ອະທິບາຍລະອຽດ

- ຂັ້ນຕອນການກະກຽມ

ການກະກຽມດິນແມ່ນໄຖດິນຕາກແດດປະມານ1 ອາທິດເພື່ອຂ້າເຊື້ອພະຍາດໃຫ້ຕາຍແລ້ວຈຶ່ງໄຖ ແລະ ຄາດ ແລ້ວກໍ່ຂຸດຂຸມປູກຫ່າງກັນປະມານ 1ແມັດ x 0.8 ແມັດ ແລະ ຂຸມມີນເສັ້ນຜ່າກາງປະມານ 10 ຊັງຕີແມັດ , ສ່ວນແນວພັນຢາແມ່ນໃຊ້ແນວພັນເບເລ້ ໃນລາຄາ1ກິໂລຕໍ່100,000ກີບ ຫຼື ຊາວສວນອາດຄັດຈ້ອນເອົາແນວພັນທີ່ປູກໄວ້ໃນປີຜ່ານມາ, ການກະກຽມເບ້ຍແມ່ນຫວ່ານໃສ່ໜານທີ່ກະກຽມໄວ້ຄືກັນກັບໜານຜັກ ຂະໜາດຂອງໜານກ້ວາງ 1 ແມັດ, ລວງຍາວແມ່ນອີງຕາມເງື່ອນໄຂຂອງເນື້ອທີ່ດິນເມື່ອເບ້ຍຢາສູບອາຍຸໄດ້ປະມານ 2ເດືອນຈຶ່ງສາມາດນຳເອົາໄປປູກໄດ້.

- ຂັ້ນຕອນທີ 2 ຂັ້ນຕອນການປູກ

ການປູກແມ່ນຂຸມລະເບ້ຍ ໂດຍເລືອກເຝັ້ນເອົາເບ້ຍທີ່ສົມບູນດີ  ກ່ອນປູກແມ່ນຕ້ອງໄດ້ເອົາຮາກຈຸ່ມນ້ຳຢາບຳລຸງສາກ່ອນ, ແຕ່ລະຂຸມກໍ່ຕ້ອງໄດ້ຫົດນ້ຳໃຫ້ຊຸ່ມເພື່ອຮັບປະກັນວ່າເບ້ຍຢາແຕ່ລະເບ້ຍບໍ່ໃຫ້ຕາຍ.

- ຂັ້ນຕອນທີ 3 ຂັ້ນຕອນການບົວລະບັດຮັກສາ

ການບົວລະບັດຮັກສາແມ່ນຕ້ອງໄດ້ເອົາໃຈໃສ່ຈົນກວ່າຢາຕິດປະມານ7 ວັນ, ຫຼັງຈາກຢາຕິດແລ້ວກໍ່ໃສ່ປຸຍ ສູດ46- 00-00, ໃສ່ເທື່ອທຳອິດແມ່ນອາຍຸຢາໄດ້ 10ວັນແລ້ວ, ຫຼັງຈາກນັ້ນແມ່ນຕ້ອງໄດ້ໃສ່ທຸກໆ 15ວັນ ດ້ວຍວິທີຢອດໃສ່ແຕ່ລະຂຸມ. ການຫົດນ້ຳແມ່ນ7ວັນຫົດເທື່ອໜຶ່ງເມື່ອຫົດນ້ຳໃນເທື່ອທີສາມແມ່ນຕ້ອງໄດ້ໂຮຍເມັດປຸຍໃສ່ຕື່ມ. ການຫົດນ້ຳຮອດເທື່ອທີ10ແລ້ວກໍ່ຈຶ່ງກຳນົດເອົາໃບຢາຕົ້ນລະ 15 ຫາ 18 ໃບແລ້ວຈຶ່ງເດັດຍອດ ແລະຢອດຢາໃສ່ແໜງເພື່ອບໍ່ໃຫ້ແໜງຢາປົ່ງຂຶ້ນ.

- ຂັ້ນຕອນທີ 4 ຂັ້ນ ຕອນການເກັບກ່ຽວ

ເມື່ອໃບຢາແກ່ຈົນເຫຼືອງແລ້ວກໍ່ລິເອົາໃບຕີນ 3 - 5 ໃບ ເພື່ອມາຈ່າມຕາກໃຫ້ແຫ້ງ (ຕາກໃສ່ຮົ່ມຕາມຕະລ່າງເຮືອນ ໂດຍບໍ່ໃຫ້ຝົນຖືກ) , ຕໍ່ມາກໍ່ຕັດຕົ້ນມາຫ້ອຍຕາກຄືກັນກັບຕາກຢາໃບຕີນ. ພາຍຫຼັງຕາກຢາແຫ້ງແລ້ວເຮົາກໍ່ເອົາລົງມາປົດແລ້ວກໍ່ແຍກປະເພດສີເຊັ່ນ: ສີເຫຼືອງແມ່ນລາຄາແພງ,ສີແດງແມ່ນລາຄາປານກາງ, ສີດຳແມ່ນລາຄາຕ່ຳ ສຸດທ້າຍກໍ່ເອົາມາມັດເປັນກຳ ແລະ ອັດເປັນລູກຂາຍໃຫ້ບໍລິສັດຢາສູບອາແດງ ແລະ ບໍລິສັດດອກໄມ້ແດງ.

## 4. ບັນຫາ ແລະ ວິທີແກ້ໄຂ

ການປູກຢາສູບໃນປະຈຸບັນນີ້ມີບັນຫາຢາຕິດເຊື້ອພະຍາດເຊິ່ງສາຍເຫດມາຈາກບໍ່ໄດ້ຂ້າເຊື້ອພະຍາດໃນເວລາປູກຢາສູບ, ວິທີແກ້ໄຂແມ່ນຕ້ອງໄດ້ໃສ່ປູນຂາວເວລາໄຖດິນຕາກແດດ.